ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1414---

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ______/ກທຄວ

ນະຄອນຫລວງວຽງຈັນ,ວັນທີ27ກັນຍາ 2017

# ແຈ້ງການ

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫລວງ;

- ເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ;

ເລື່ອງ: ການສົ່ງຂໍ້ມູນວິສາຫະກິດ ເຂົ້າຖານຂໍ້ມູນວິສາຫະກິດແຫ່ງຊາດ

ເພື່ອເຮັດໃຫ້ການຄຸ້ມຄອງຂໍ້ມູນວິສາຫະກິດ ລວມສູນຢູ່ໃນລະບົບຄຸ້ມຄອງຖານຂໍ້ມູນວິສາຫະກິດແຫ່ງຊາດ, ສາມາດຄຸ້ມຄອງຜ່ານລະບົບໂປຣແກຣມຢ່າງສະດວກ ວ່ອງໄວ ແລະ ທັນສະໄໝ ແລະເພື່ອເປັນການຍາດແຍ່ງເອົາການຊ່ວຍເຫລືອຈາກອົງການຈັດຕັ້ງສາກົນໃຫ້ຫລາຍຂຶ້ນ.

ກົມທະບຽນ ແລະຄຸ້ມຄອງວິສາຫະກິດ ຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ມາຮອດປະຈຸບັນຍັງມີ ຈຳນວນ 34ເມືອງ ຢູ່ໃນບັນດາແຂວງໄດ້ມີລະບົບໂປຣແກຣມຄຸ້ມຄອງທະບຽນວິສາຫະກິດແລ້ວ, ແຕ່ຍັງບໍ່ເຄີຍໄດ້ສົ່ງຂໍ້ມູນເຂົ້າຖານຂໍ້ມູນວິສາຫະກິດແຫ່ງຊາດ ແລະ ຍັງມີບາງເມືອງຍັງສົ່ງຊັກຊ້າ ຊຶ່ງເຮັດໃຫ້ການສັງລວມຂໍ້ມູນວິສາຫະກິດໃນທົ່ວປະເທດບໍ່ທັນຄົບຖ້ວນສົມບູນ. ສະນັ້ນ ໃຫ້ເອົາໃຈໃສ່ປະຕິບັດດັ່ງນີ້:

1. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຢູ່ຂັ້ນພະແນກ ປະສານເກັບກຳເອົາຂໍ້ມູນການຂຶ້ນທະບຽນວິສາຫະກິດຢູ່ບັນດາເມືອງ ສົ່ງໃຫ້ກົມທະບຽນ ແລະຄຸ້ມຄອງວິສາຫະກິດ, ພ້ອມທັງແນະນຳຄືນກ່ຽວກັບວິທີການ ຄຸ້ມຄອງ ແລະ ນຳສົ່ງຂໍ້ມູນໃຫ້ ເຈົ້າໜ້າທີ່ທະບຽນວິສາຫະກິດ ຢູ່ຂັ້ນເມືອງຖ້າເຫັນວ່າຍັງບໍ່ທັນເຂົ້າໃຈແຈ້ງ;

2. ວິທີສົ່ງ: ໃຫ້ສົ່ງທາງອີເມວ (email: ned.database@gmail.com) ຫລື ອັດໃສ່ CD, USB;

- ສຳລັບແຂວງ, ນະຄອນຫລວງ ແລະ ເມືອງ ທີ່ໄດ້ມີລະບົບສົ່ງອັດຕະໂນມັດ (Auto Run) ຂໍ້ມູນຈະສົ່ງດ້ວຍລະບົບເອງ ເລີ່ມແຕ່ເວລາ9.00ໂມງຂອງທຸກໆວັນ, ສະນັ້ນ ຕ້ອງເປີດສັນຍານອິນເຕີເນັດໄວ້ກ່ອນເວລາດັ່ງກ່າວນີ້;

3. ກຳນົດເວລາສົ່ງ:

- ບັນດາເມືອງທີ່ຍັງບໍ່ເຄີຍສົ່ງ ໃຫ້ສົ່ງສຳເລັດກ່ອນວັນທີ 31/10/2017(ມີລາຍຊື່ເມືອງຄັດຕິດພ້ອມນີ້);
- ເມືອງທີ່ຍັງບໍ່ມີລະບົບສົ່ງອັດຕະໂນມັດ(Auto Run) ຕ້ອງສົ່ງໃນທຸກໆສາມເດືອນ(ໃຕມາດ);

4. ໃຫ້ຕິດຕາມເບິ່ງການສົ່ງຂໍ້ມູນເຂົ້າຖານຜ່ານເວັບໄຊ: www.erm.gov.la/j-uploadreport.asp ຖ້າເຫັນຂໍ້ມູນຍັງບໍ່ຖືກສົ່ງໃຫ້ກວດກາຄືນ, ຖ້າມີບັນຫາບໍ່ສາມາດສົ່ງໄດ້ໃຫ້ແຈ້ງຕໍ່ກົມຊາບ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຈັດຕັ້ງປະຕິບັດ.

ຫົວໜ້າກົມ

ດຣ.ສົມພອງ ພຽນພິນິດ

ຕິດຕໍ່ພົວພັນ:

- ທ່ານ ບຸນຈັນ 02058589001; WatsApp 020 96638135

Scanned by CamScanner